ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ສັນຕິບານ

ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ເລກທີ **1026**/ກຕມ

ນະຄອນຫຼວງວຽງຈັນ, ວັນທີ **03 ມິຖຸນາ 2020**

# ແຈ້ງການ

**ເຖິງ :** ພະແນກ ຕມ ຫ້ອງສັນຕິບານ ກອງບັນຊາການ ປກສ ນະຄອນຫຼວງ, ບັນດາແຂວງ ແລະບັນດາດ່ານ ຕໍາຫຼວດ ກວດຄົນເຂົ້າ-ອອກເມືອງ ສາກົນ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ສືບຕໍ່ປະຕິບັດມາດຕະການຜ່ອນຜັນ ຕໍ່ກັບຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ໃນໄລຍະປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂ ການລະບາດຂອງພະຍາດ COVID-19

- ອີງຕາມ ຄໍາສັ່ງ ຂອງທ່ານ ນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີ ມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ແລະ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020 ກ່ຽວກັບ ການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂ ການລະບາດ ຂອງພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 084/ປກສ, ລົງວັນທີ 03 ກຸມພາ 2010 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ;
- ອີງຕາມ ທິດຊີ້ນໍາ ຂອງກົມໃຫຍ່ສັນຕິບານ ກ່ຽວກັບມາດຕະການຜ່ອນຜັນ ຕໍ່ກັບຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ ໃນໄລຍະປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະແກ້ໄຂ ການລະບາດຂອງພະຍາດ COVID-19.

ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ: ເພື່ອເປັນການອໍານວຍຄວາມສະດວກ ແລະ ໃຫ້ການຊ່ວຍເຫຼືອ ຕໍ່ກັບຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ ທີ່ຈະເດີນທາງອອກ ແລະຍັງຈະສືບຕໍ່ພັກອາໄສ ຢູ່ ສປປ ລາວ, ໃຫ້ປະຕິບັດ ຄືດັ່ງນີ້:

1. ໃຫ້ບັນດາດ່ານ ຕມ ສາກົນ ອໍານວຍຄວາມສະດວກ ໃນການເດີນທາງ ອອກ ສປປ ລາວ ໃຫ້ຄົນຕ່າງປະເທດ ແລະຄົນ ບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດ ເດີນທາງກັບຄືນປະເທດ ຈາກຄະນະສະເພາະກິດ ກະຊວງການຕ່າງປະເທດ (ກົມກົງສຸນ) ກໍຄື ຕາມແຈ້ງການ ຂອງກົມ ຕມ, ໂດຍຫ້າມບໍ່ໃຫ້ມີການປັບໃໝ ຢູ່ເກີນກໍານົດ ແລະຫ້າມບໍ່ໃຫ້ເກັບຄ່າທໍານຽມ ການຕໍ່ເວລາ ພັກເຊົາຍ້ອນຫຼັງ ຢ່າງເດັດຂາດ. (ສໍາລັບຜູ້ທີ່ມີກໍານົດພັກເຊົາ ນັບຕັ້ງແຕ່ວັນທີ 29 ມີນາ 2020 ເປັນຕົ້ນມາ ຈົນເຖິງປັດຈຸບັນ);
2. ໃຫ້ບັນດາພະແນກ ຕມ ຫ້ອງສັນຕິບານ ກອງບັນຊາການ ປກສ ແຂວງ ໃນຂອບເຂດທົ່ວປະເທດ ສາມາດອະນຸຍາດ ຕໍ່ເວລາພັກເຊົາຊົ່ວຄາວ ໃຫ້ຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດ ທີ່ມີຈຸດປະສົງສືບຕໍ່ພັກອາໄສຢູ່ພາຍໃນແຂວງຂອງຕົນ, ໂດຍຫ້າມ ບໍ່ໃຫ້ມີການປັບໃໝ ແລະບໍ່ເກັບຄ່າທໍານຽມຍ້ອນຫຼັງ (ສໍາລັບຜູ້ທີ່ມີກໍານົດພັກເຊົາ ນັບຕັ້ງແຕ່ວັນທີ 29 ມີນາ 2020 ເປັນຕົ້ນມາ ຈົນເຖິງ ປັດຈຸບັນ), ແຕ່ຕໍ່ເວລາພັກເຊົາໃຫ້ໄດ້ ໂດຍໃຫ້ຄິດໄລ່ຄ່າທໍານຽມ ແລະຄ່າບໍລິການ ຕາມລະບຽບການ ກ່ຽວຂ້ອງກໍານົດໄວ້ ນັບແຕ່ມື້ທີ່ໄດ້ຮັບຄໍາຮ້ອງ ຂໍຕໍ່ເວລາພັກເຊົາຊົ່ວຄາວ ຢູ່ ສປປ ລາວ ເປັນຕົ້ນໄປ.

***ໝາຍເຫດ:*** ແຈ້ງການສະບັບນີ້ນໍາໃຊ້ປ່ຽນແທນ ແຈ້ງການສະບັບເລກທີ 1023/ກຕມ, ລົງວັນທີ 25 ພຶດສະພາ 2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ, ກໍລະນີ ມີການປ່ຽນແປງ ຈະແຈ້ງ ໃຫ້ຊາບຕາມພາຍຫຼັງ.

**ຫົວໜ້າກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ**

ກົມໃຫຍ່ສັນຕິບານ ... ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ

**ສາຍສະໝອນ ສີວິໄລ**


<u>ຜູ້ປະສານງານ:</u>

ພັທ ເພັດດາວົງ ແກ້ວກັນຍາ 020 5552 6405

ພັທ ວິໄລ ເກດລາສີ 020 5544 4000

ຮທ ສຸກພາລັກ ທໍາມະວົງ 020 5679 6061